**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

---

# ບົດບັນທຶກ ກອງປະຊຸມການປຶກສາຫາລືຄັ້ງທີ 2 ກ່ຽວກັບ ການປະເມີນສິ່ງແວດລ້ອມເບື້ອງຕົ້ນ ຂອງໂຄງການ ເຂດໂລຊິດຕິກ ນະຄອນຫຼວງວຽງຈັນ, ວັນທີ 07 ພະຈິກ 2014, ທີ່ຫ້ອງວ່າການປົກຄອງ ນະຄອນຫຼວງວຽງຈັນ

ກອງປະຊຸມການປຶກສາຫາລືຄັ້ງທີ 2 ກ່ຽວກັບ ການປະເມີນສິ່ງແວດລ້ອມເບື້ອງຕົ້ນ ຂອງ ໂຄງການ ເຂດໂລຊິດຕິກ ນະຄອນຫຼວງວຽງຈັນ, ວັນທີ 07 ພະຈິກ 2014, ທີ່ຫ້ອງວ່າການປົກຄອງ ນະຄອນຫຼວງວຽງຈັນ, ຄັ້ງນີ້ພາຍໃຕ້ການເປັນປະທານຂອງທ່ານ ດຣ ນາງ ບົວອອນ ໄຊຍະລາດ, ຮອງ ຫົວໜ້າພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ. ມີຜູ້ເຂົ້າຮ່ວມ ກອງປະຊຸມທັງໝົດ 42 ຄົນ ມາຈາກ ພາກລັດ, ເອກະຊົນ, ບ້ານ ລວມເຖິງ ປະຊາຊົນທີ່ນຳໃຊ້ດິນໃນ ເຂດສະເໜີຂອງໂຄງການດັ່ງກ່າວ.

ອີງການຈັດຕັ້ງ ຈາກພາກສ່ວນລັດທີ່ເຂົ້າຮ່ວມກອງປະຊຸມ ປະກອບມີ ກົມຂົນສົ່ງ ແລະ ກົມທາງ ລົດໄຟ, ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອ້ອມຂ້າງພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.ນວ, ພະແນກ ແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ, ພະແນກ ຖະແຫຼ່ງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ, ຫ້ອງການ ໂຍທາທິການ ແລະ ຂົນສົ່ງ, ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງໄຊເສດຖາ, ອຳນາດ ການປົກຄອງບ້ານ ນາຄວາຍໃຕ້ ແລະ ເຈົ້າຂອງທີ່ດິນ ໃນເຂດພື້ນທີ່ສະເໜີໂຄງການ VLP, ພາກສ່ວນ ເອກະຊົນ ປະກອບມີ ບໍລິສັດ ກໍ່ສ້າງ ນ້ຳທາ/ບໍລິສັດ ພັດທະນາທີ່ດິນແບບເຊື່ອມສານລາຍຊື່ຜູ້ເຂົ້າຮ່ວມ ກອງປະຊຸມ ແມ່ນໃນເອກະສານແນບທ້າຍ 1.

ກອງປະຊຸມ ໄດ້ຈັດຕັ້ງຂຶ້ນໃນຕອນເຊົ້າ ຂອງວັນທີ 07 ພະຈິກ 2014, ວາລະຂອງກອງປະຊຸມ ແມ່ນໃນ ເອກະສານແນບທ້າຍ 2, ເລີ່ມຈາກ 1) ກ່າວຕ້ອນຮັບ ແລະ ການແນະນຳຕົວຂອງຜູ້ເຂົ້າຮ່ວມ, 2) ການ

ເປີດກອງປະຊຸມ, 3) ການສະເໜີບົດ ແລະ 4) ການປຶກສາຫາລື ແລະ ຄຳຖາມຄຳຕອບ ແລະ ສຸດທ້າຍ 5) ການກ່າວປິດກອງປະຊຸມ.

ການກ່າວຕ້ອນຮັບ ແລະ ການແນະນຳຕົວ ຂອງບັນດາແຂກຜູ້ເຂົ້າຮ່ວມ ນຳສະເໜີໂດຍ ທ່ານ ຄຳເກົ້ງ , ທີ່ປຶກສາ ດ້ານສິ່ງແວດລ້ອມ. ການກ່າວເປີດກອງປະຊຸມ ໂດຍໄດ້ຮັບກຽດຈາກ ທ່ານ ດຣ ນາງ ບົງອອນ ໄຊຍະລາດ ຮອງຫົວໜ້າພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມນະຄອນຫຼວງວຽງຈັນ. ບົດສະເໜີທຳອິດ ກ່ຽວກັບ ຜົນຂອງການປຶກສາຫາລື ຄັ້ງທຳອິດ ຂອງການປຶກສາຫາລືດ້ານສິ່ງແວດລ້ອມເບື້ອງຕົ້ນດັ່ງກ່າວ ທີ່ໄດ້ຈັດຂຶ້ນໃນວັນທີ 30 ພຶດສະພາ 2014. ບົດສະເໜີ ທີສອງ ກ່ຽວກັບ ແຜນການ ແລະ ຄວາມຄືບໜ້າ ໃນໂຄງການພາກຂະຫຍາຍ ທາງລົດໄຟ ໂດຍທ່ານ ຈັນທອນ ໄຊຍະກອນ ໂດຍຫຍໍ້, ໂຄງການກໍ່ສ້າງ CY, ກະຊວງ ໂຍທາທິການ ແລະ ຂົນສົ່ງ. ບົດສະເໜີ ທີສາມ ກ່ຽວກັບການສະເໜີ ຕໍ່ກັບໂຄງການ ເຂດໂລຊິດຕິກ ນະຄອນຫຼວງວຽງຈັນ (VLP) ສະເໜີໂດຍ ທ່ານ ວັນທະກອນ ເດດວົງສາ, ທີ່ປຶກສາດ້ານສິ່ງແວດລ້ອມ ແລະ ບົດສະເໜີ ສຸດທ້າຍ ກ່ຽວກັບ ຄວາມຕ້ອງການດ້ານການຄຸ້ມຄອງສິ່ງແວດລ້ອມ, ການວາງແຜນສະພາບລວມ ແລະ ວິທີການ ໂດຍ ທ່ານ ວັນທະກອນ ເດດວົງສາ, ທີ່ປຶກສາສິ່ງແວດລ້ອມ ຫົວໜ້າທີມ. ລາຍລະອຽດຂອງ ບົດສະເໜີດັ່ງກ່າວ ແມ່ນໃນເອກະສານແນບທ້າຍ 3, 4, 5 ແລະ 6 ຕາມລຳດັບ.

ພາຍຫຼັງການສະເໜີບົດ, ຜູ້ເຂົ້າຮ່ວມໄດ້ເຂົ້າຮ່ວມໃນການປຶກສາຫາລື ໂດຍມີຄຳຖາມ, ຄຳເຫັນ ແລະ ຂໍ້ແນະນຳ ໄດ້ຖືກຍົກຂຶ້ນ ແລະ ປຶກສາຫາລື ໃນວົງກອງປະຊຸມ. ໃນການປຶກສາຫາລື, ສາມາດສັງເກດ ແລະ ສະຫຼຸບລວມໄດ້, ດ້ວຍບັນຍາກາດທີ່ດີ ແລະ ເປັນໄປໃນແນວທາງສ້າງສັນ, ຜູ້ເຂົ້າຮ່ວມກອງປະຊຸມສ່ວນໃຫຍ່ ລ້ວນແລ້ວແຕ່ເຫັນດີກັບໂຄງການແຕ່ໃນກໍລະນີບົດລາຍງານການສຶກສາ ປະເມີນສິ່ງແວດລ້ອມເບື້ອງຕົ້ນ ຕໍ່ກັບການລະບຸ ແລະ ກຳນົດລະດັບຜົນກະທົບ ລວມເຖິງມາດຕະການປ້ອງກັນ ໃນກໍລະນີເກີດມີຜົນກະທົບທີ່ສຳຄັນ. ໃນກຸ່ມຂອງຜົນກະທົບ, ໃນກອງປະຊຸມ ໄດ້ຍົກປະເດັນ ຕໍ່ກັບການນຳໃຊ້ທີ່ດິນ ຫຼືຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ ຫຼາຍກວ່າ ຜົນກະທົບທາງດ້ານຊີວະນາໆພັນ ແລະ ທາງກາຍຍະພາບ ແລະ ໃນການສະແດງອອກ ແລະ ຄຳເຫັນທີ່ສຳຄັນ ກ່ຽວກັບບັນຫາການນຳໃຊ້ ທີ່ດິນ ແມ່ນໄດ້ຖືກສະຫຼຸບດັ່ງລຸ່ມນີ້:

1. *ທ່ານ ສອນສັກ ຮອງຫົວໜ້າກົມລົດໄຟ,*

ໂຄງການວຽງຈັນໂລຈິສຕິກ ຖືວ່າເປັນໂຄງການທີ່ຈຳເປັນ ແລະ ມີປະໂຫຍດສູງ ຕໍ່ທັງປະຊາຊົນ ແລະ ປະເທດ. ເຮັດໃຫ້ມີຜົນກະທົບຕໍ່ກັບຫຼຸດຜ່ອນສິນຄ້າລົງໄດ້ຢ່າງຫຼວງຫຼາຍ. ເຫັນວ່າບັນຫາກ່ຽວກັບຜົນກະທົບຈາກການພັດທະນາໂຄງການ ເຫັນວ່າບໍ່ມີຜົນກະທົບຫຼາຍ. ແຕ່ສິ່ງທີ່ຍັງມີຄວາມກັງວົນຄື ການແຕ່ງຕັ້ງ ຄະນະກຳມະການ ເພື່ອໃຫ້ມີການໄກ່ເກ່ຍບັນຫາທີ່ດິນ ຊຶ່ງໄດ້ມີການສະເໜີແຕ່ວັນທີ 04 ມິຖຸນາ

2014 ແຕ່ຍັງບໍ່ໄດ້ຮັບການເຊັນຮັບຮອງ ຈາກທາງເຈົ້າຄອງນະຄອນຫຼວງວຽງຈັນເທື່ອ. ເຮັດໃຫ້ບັນຫານີ້ຍັງບໍ່ສາມາດແກ້ໄຂໄດ້, ອີກດ້ານໜຶ່ງ, ຄ່າຊົດເຊີຍທີ່ດິນ ທີ່ມີການເບີກໃຫ້ທາງກະຊວງ ຍທຂ ໃນແຕ່ລະງວດເຫັນວ່າຍັງບໍ່ພຽງພໍ ຕໍ່ກັບຈຳນວນເງິນທີ່ຊົດເຊີຍໃຫ້ກັບຜູ້ທີ່ຖືກຜົນກະທົບ ຊຶ່ງເປັນບັນຫາທາງດ້ານການເງິນຂອງລັດຖະບານເອງ ອາດຈະມີການຈ່າຍຄ່າຊົດເຊີຍເປັນຫຼາຍງວດ.

*2. ທ່ານ ວິໄລສັກ, ແນວໂຮມ ບ້ານ ນາຄວາຍໃຕ້*

ໃນນາມທີ່ເປັນຄະນະ ການປົກຄອງບ້ານ ໄດ້ອະທິບາຍ ກ່ຽວກັບ ເຫດການໃນການຈັບຈອງທີ່ດິນໃນເຂດປ່າສະຫງວນດົງໂພສີ ໃນໄລຍະທີ່ຜ່ານມາ, ພາຍຫຼັງທີ່ທ່ານວິໄລສັກ ທີ່ໄດ້ເຂົ້າເປັນຄະນະປົກຄອງບ້ານ ແຕ່ປີ 2007 ເຫັນວ່າແຕ່ກ່ອນແມ່ນທາງນາຍບ້ານໃນສະໄໝກ່ອນ ເປັນຜູ້ອອກໃບນຳໃຊ້ທີ່ດິນໃຫ້ໂດຍບໍ່ໄດ້ແຈ້ງວ່າເປັນທີ່ດິນປ່າສະຫງວນ, ໄດ້ມີການເສຍພາສີ ແລະ ໂຈະການເສຍກັບໄປກັບມາຢູ່, ຕັ້ງແຕ່ປີ 2011 ຈົນເຖິງແມ່ນບໍ່ໄດ້ມີການເສຍພາສີທີ່ດິນໃນເຂດດັ່ງກ່າວແລ້ວ.

*3. ທ່ານນາງ ອິນແປງ ວົງສາ, ເຈົ້າຂອງທີ່ດິນ:*

ເຫັນດີກັບການພັດທະນາໂຄງການດັ່ງກ່າວ ເຫັນວ່າປະໂຫຍດຫຼາຍ, ແຕ່ໃນສ່ວນທີ່ຕ້ອງການຈະຍົກຂຶ້ນຄື: ກ່ຽວກັບບັນຫາທີ່ດິນ ທີ່ທາງລັດຖະບານຍັງບໍ່ທັນໄດ້ມີການໄກ່ເກ່ຍ, ໂດຍສ່ວນຕົວ ແມ່ນຕ້ອງການຢາກຈະຮູ້ເວລາ ໃນການຊົດເຊີຍ, ຢາກໃຫ້ມີການຊົດເຊີຍ ເປັນງວດດຽວ ແລະ ຕ້ອງການຢາກຈະຮູ້ວ່າ ທີ່ດິນ ບາງສ່ວນທີ່ບໍ່ຖືກໂຄງການ ຈະສາມາດນຳໃຊ້ ຫຼື ອອກໃບຕາດິນໄດ້ບໍ່.

*4. ທ່ານ ສູນທອນ ວໍລະສານ, ເຈົ້າຂອງທີ່ດິນ.*

ເຫັນດີກັບການສະເໜີໃນການພັດທະນາໂຄງການດັ່ງກ່າວ, ແຕ່ຕ້ອງການຢາກໃຫ້ທາງລັດຖະບານແກ້ໄຂບັນຫາ ກ່ຽວກັບທີ່ດິນທີ່ຖືກໂຄງການໃຫ້ມີຄວາມໂປ່ງໃສ ແລະ ເນື່ອງຈາກວ່າ ເວລາຊື້ດິນ ກໍ່ບໍ່ໄດ້ແຈ້ງວ່າ ເປັນທີ່ດິນໃນເຂດປ່າສະຫງວນ ແຕ່ແຈ້ງວ່າເປັນທີ່ດິນທົ່ງນາ ແລະ ລາຄາຖືກຈິ່ງຢາກຈະຊື້ເອົາໄວ້. ສະນັ້ນ, ຢາກໃຫ້ທາງລັດຖະບານຊ່ວຍພິຈາລະນາ ແກ້ໄຂໃຫ້ຢ່າງເໝາະສົມ ແລະ ໂປ່ງໃສ.

*5. ທ່ານ ຈັນທອນ ໄຊຍະກອນ, ໂຄງການກໍ່ສ້າງ CY ກົມທາງລົດໄຟ*

ດິນປ່າສະຫງວນດົງໂພສີ ນີ້ແມ່ນໄດ້ຖືກກຳນົດໃຫ້ເປັນເຂດປ່າສະຫງວນ ຕັ້ງແຕ່ປີ 1975, ສະນັ້ນ ກ່ຽວກັບລະບຽບຫຼັກການ ທາງດ້ານກົດໝາຍ ແມ່ນປະຊາຊົນບໍ່ມີສິດຖືຄອງເປັນເຈົ້າຂອງ ຫຼື ປູກຝັງບໍ່ໄດ້. ແຕ່ມາເຖິງປະຈຸບັນ, ເມື່ອມີບັນຫາດັ່ງກ່າວ ມີການກະຈາຍອຳນາດລົງສູ່ທ້ອງຖິ່ນຈິ່ງ ເຮັດໃຫ້ມີການຕັດສິນບາງບັນຫາທີ່ບໍ່ຖືກຕ້ອງ ສະນັ້ນ, ໜ່ວຍງານຄຸ້ມຄອງທີ່ດິນກໍ່ຕ້ອງແກ້ໄຂຕາມລະບຽບກົດໝາຍທີ່ວາງອອກ.

*6. ທ່ານບາງ ພິມມະສອນ ສິມມະໂນທຳ, ເຈົ້າຂອງທີ່ດິນ*

ໂດຍຜ່ານການສະເໜີໃນກອງປະຊຸມ ຂ້າພະເຈົ້າ ແມ່ນເຫັນດີກັບແນວທາງໃນການພັດທະນາເຂດດັ່ງກ່າວ ບໍ່ໄດ້ມີເຈດຕະນາຍາກຈະຄັດຄ້ານອັນໃດ. ແຕ່ຂໍ້ສະເໜີຈາກເຈົ້າຂອງທີ່ດິນ ຄືຕ້ອງການໃຫ້ລັດຖະບານມີການຊົດເຊີຍໃຫ້ມີຄວາມເໝາະສົມ, ໂປ່ງໃສ ແລະ ສະເໜີວ່າຖ້າເປັນໄປໄດ້ ຕ້ອງການທີ່ຍາກຈະໄດ້ເງິນເປັນງວດດຽວ. ນອກນັ້ນ, ດິນສວນຂອງຂ້າພະເຈົ້າ ບາງສ່ວນແມ່ນຢູ່ນອກເຂດໂຄງການ ສະນັ້ນ ຈຶ່ງຢາກສະເໜີວ່າຖ້າບໍ່ຖືກໂຄງການທັບຊ້ອນຢາກຈະຂໍນຳໃຊ້ທີ່ດິນທີ່ເຫຼືອນັ້ນຕໍ່ໄປ.

*7. ທ່ານ ຄຳຄ່ອງ, ພະແນກ ຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ*

ພາຍຫຼັງ ທີ່ຂ້າພະເຈົ້າໄດ້ສຶກສາ ບົດລາຍງານສະບັບຫຍໍ້ ຂອງການສຶກສາສິ່ງແວດລ້ອມເບື້ອງຕົ້ນໂຄງການວຽງຈັນໂລຈິສຕິກ ເຫັນວ່າບັນດາຜົນກະທົບ ແລະ ມາດຕະການໃນການຫຼຸດຜ່ອນ ຍັງມີບາງຈຸດທີ່ຕ້ອງໄດ້ມີການປຶກສາຫາລືທາງດ້ານວິຊາການ ຮ່ວມກັບທີມງານໃນການສຶກສາເພີ່ມເຕີມ ຈຶ່ງຈະເຮັດໃຫ້ບົດລາຍງານມີຄວາມສົມບູນກ່ອນ.

*8. ພະແນກກະສິກຳ ແລະປ່າໄມ້*

ໃນການຊົດເຊີຍທີ່ດິນ ທີ່ເປັນບັນຫາໃນການປຶກສາຫາລືກັນ ເປັນສ່ວນໃຫຍ່ໃນກອງປະຊຸມຄັ້ງນີ້ ອີງຕາມປະສົບການຂອງຂ້າພະເຈົ້າ ເຫັນວ່າ ຖ້າວ່າທາງລັດຖະບານ ສາມາດຫາທາງອອກ ໃຫ້ກັບປະຊາຊົນຜູ້ທີ່ຖືກຜົນກະທົບໄດ້ ຍົກຕົວຢ່າງ ໃນໂຄງການ ສ້າງສະໜາມກິລາແຫ່ງຊາດ ຫຼັກ 16 ຫຼື ບາງໂຄງການ ລັດຖະບານໄດ້ມີການທົດແທນເປັນທີ່ດິນໃຫ້ກັບປະຊາຊົນ. ຖ້າເປັນໄປໄດ້ ຂ້າພະເຈົ້າ ຢາກສະເໜີໃຫ້ລັດຖະບານ ຊ່ວຍພິຈາລະນາຄວາມເປັນໄປໄດ້ ໃນທາງເລືອກຕ່າງໆ ເພື່ອເຮັດໃຫ້ສາມາດຊົດເຊີຍໃຫ້ກັບປະຊາຊົນໄດ້ຢ່າງເໝາະສົມ.

*9. ທ່ານ ນາງ ບົວອອນ ໄຊຍະລາດ, ປະທານກອງປະຊຸມ:*

ອີງຕາມຄຳເຫັນຈາກກອງປະຊຸມ ແມ່ນເຫັນເປັນເອກະພາບຕໍ່ກັບ ວຽກງານການພັດທະນາໂຄງການ ວຽງຈັນໂລຈິສຕິກ ດັ່ງກ່າວທີ່ຈະເຮັດໃຫ້ເປັນຜົນປະໂຫຍດອັນໃຫຍ່ຫຼວງແກ່ປະເທດຊາດ ເຊັ່ນດຽວກັບປະຊາຊົນ. ສ່ວນເນື້ອໃນດ້ານວິຊາການ ໃນບົດລາຍງານຂອງໂຄງການດັ່ງກ່າວ ແມ່ນຈະໄດ້ມີການປັບປຸງໃຫ້ມີຄວາມເໝາະສົມ ເພື່ອເປັນບ່ອນອີງໃນການອອກໃບອະນຸຍາດ ທາງດ້ານສິ່ງແວດລ້ອມ.

ສ່ວນບັນຫາກ່ຽວກັບທີ່ດິນ ແມ່ນເປັນບັນຫາລະຫວ່າງພາກສ່ວນລັດຖະບານ ແລະ ປະຊາຊົນທີ່ມີທີ່ດິນໃນພື້ນທີ່ຂອງໂຄງການ ຈະໄດ້ມີການໄກ່ເກ່ຍກັນພາຍໃນ, ຊຶ່ງຈະເປັນການປຶກສາກັນໂດຍບໍ່ມີຜົນຕໍ່ກັບການ ອອກໃບອະນຸຍາດການສຶກສາສິ່ງແວດລ້ອມດັ່ງກ່າວ.

ໃນນາມຂອງພະແນກ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຈະໄດ້ເຮັດບົດລາຍງານຫາທ່ານເຈົ້າຄອງນະຄອນຫຼວງວຽງຈັນ, ປະກອບກັບໜັງສືການແຕ່ງຕັ້ງຄະນະກໍາມະການໃນການຊົດເຊີຍບັນຫາທີ່ດິນໃນເຂດພື້ນທີ່ໂຄງການ ເພື່ອເຮັດໃຫ້ບັນຫາດັ່ງກ່າວທີ່ຄົງຄ້າງ ສາມາດແກ້ໄຂໃນເວລາອັນເໝາະສົມ.

ນະຄອນຫຼວງວຽງຈັນ, ວັນທີ 13 NOV 2014

ປະທານກອງປະຊຸມ

ຜູ້ບັນທຶກກອງປະຊຸມ

ວັນທະກອນ ເດດວົງສາ

ດຣ ບົງອອນ ໄຊຍະລາດ